**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

ຄະນະສາທາລະນະສຸກສາດ

ເລກທີ 0326 /ຄສສ

ນະຄອນຫຼວງວຽງຈັນ, ວັນທີ 06 ກໍລະກົດ 2023

**ໜັງສືແຈ້ງການ**

**ຮຽນ** : ທ່ານຫົວໜ້າພະແນກສາທາແຂວງ, ໂຮງໝໍແຂວງ, ໂຮງຮຽນສາທາລະນະສຸກແຂວງ, ວິທະຍາໄລແຂວງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ

**ເລື່ອງ**: **ແຈ້ງການສົ່ງບົດຄັດຫຍໍ້ ເພື່ອເຂົ້າຮ່ວມກອງປະຊຸມວິຊາການ ດ້ານສາທາລະນະສຸກ ຄັ້ງທີ 3 ຂອງສະມາຄົມສາທາລະນະສຸກສາດລາວ ໃນວັນທີ 09 ພະຈິກ ປີ 2023 ທີ່ຫ້ອງປະຊຸມ ມະຫາວິທະຍາຍາໄລ ສຸພານຸວົງ ນະຄອນຫຼວງພະບາງ (Onsite).**

- ອີງຕາມ ຂໍ້ຕົກລົງຂອງກະຊວງສາທາລະນະສຸກສະບັບເລກທີ 03/ສພລ, ລົງວັນທີ 22/10/2020 ກ່ຽວກັບ ພາລະບົດບາດ ຂອງສະມາຄົມ ສາທາລະນະສຸກສາດລາວ
- ອີງຕາມ ຂໍ້ຕົກລົງຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ ສະບັບເລກທີ 3216/ມວສ ລົງວັນທີ 03 ກໍລະກົດ 2023.

ຄະນະບໍດີ ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

ມີຄວາມຍິນດີຂໍແຈ້ງມາຍັງທ່ານ ຄູ-ອາຈານ, ພະນັກງານ ແລະ ນັກຄົ້ນຄວ້າທີ່ກ່ຽວຂ້ອງກັບວຽກງານດ້ານສາທາລະນະສຸກ ທົ່ວປະເທດຊາບວ່າ: ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ຮ່ວມກັບ ສະມາຄົມ ສາທາລະນະສຸກສາດລາວ ໄດ້ຈັດກອງປະຊຸມວິຊາການດ້ານສາທາລະນະສຸກ ຄັ້ງທີ 3 ໃນຫົວຂໍ້ "Challenge and Achievement of National Nutritional strategy in Lao PDR" ໃນວັນທີ 09 ພະຈິກ 2023 ທີ່ຫ້ອງປະຊຸມ ມະຫາວິທະຍາຍາໄລ ສຸພານຸວົງ, ນະຄອນຫຼວງພະບາງ (Onsite).

➢ **ຈຸດປະສົງຂອງກອງປະຊຸມ:**

- ເພື່ອສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ ບັນດານັກຄົ້ນຄວ້າດ້ານສາທາລະນະສຸກສາດ ແລະ ອາດີດນັກສຶກສາ ປະລິນຍາໂທ ສາທາລະນະສຸກສາດ ທົ່ວປະເທດ.
- ເພື່ອແລກປ່ຽນຄວາມຮູ້ດ້ານການຄົ້ນຄວ້າໃນການຮ່ວມມືກັບຫຼາຍພາກສ່ວນ ແລະ ການເປັນເຈົ້າການຂອງຊຸມຊົນ ເພື່ອກຽມພ້ອມການຮັບມື ວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບໃນ ສປປ ລາວ.
- ເພື່ອແລກປ່ຽນບົດຮຽນໃນການຈັດຕັ້ງປະຕິບັດໂຄງການສົ່ງເສີມສຸຂະພາບໃນທົ່ວປະເທດ ໃຫ້ແກ່ນັກສາທາລະນະສຸກສາດລາວ.
- ເພື່ອຂະຫຍາຍສະມາຊິກ ຂອງສະມາຄົມສາທາລະນະສຸກສາດລາວ

➢ **ເນື້ອຫາໃນການເຂົ້າຮ່ວມນຳສະເໜີບົດການຄົ້ນຄວ້າ:**

- ວຽກງານໂພຊະນາການ
- ວຽກງານແມ່ ແລະ ເດັກ
- ວຽກງານສຸຂະພາບຈະເລີນພັນ

- ວຽກງານພະຍາດ ຊຶມເຊື້ອ
- ວຽກງານພະຍາດບໍ່ຊຶມເຊື້ອ
- ວຽກງານພະຍາດເກີດຂຶ້ນໃໝ່
- ວຽກງານການປ່ຽນແປງດິນຟ້າອາກາດ
- ວຽກງານການບໍລິຫານສາທາລະນະສຸກ ແລະ ການເງິນສາທາລະນະສຸກ
- ອະນາໄມສິ່ງແວດລ້ອມ ແລະ ສຸຂະພາບແຮງງານ

➢ ເງື່ອນໄຂສະໝັກ:

- ເປັນພະນັກງານສາທາລະນະສຸກ ທີ່ເຮັດວຽກກ່ຽວກັບການປິ່ນປົວ, ການກັນພະຍາດ ແລະ ສົ່ງເສີມສຸຂະພາບ.
- ຄ່າລົງທະບຽນຜູ້ລະ **100,000 ກີບ** ສໍາລັບຜູ້ເປັນສະມາຊິກ ເຂົ້າຮ່ວມກອງປະຊຸມ Onsite, **200,000 ກີບ** ສໍາລັບຜູ້ບໍ່ເປັນສະມາຊິກ, (ຊໍາລະໜ້າງານກອງປະຊຸມ)
- ສໍາລັບໃດທີ່ຕ້ອງການສະໝັກເປັນສະມາຊິກ ຂອງສະມາຄົມສາທາລະນະສຸກສາດລາວ ກະລຸນາຕອບແບບຟອມດ້ານຫຼັງແລ້ວສົ່ງໜ້າງານ
- ສໍາລັບຜູ້ນໍາສະເໜີປາກເປົ່າ (Oral) ແລະ ໂປດສະເຕີ (Poster) ແມ່ນຍົກເວັ້ນຄ່າລົງທະບຽນ (ຟຣີ).
- ກະລຸນາສົ່ງໃບລົງທະບຽນເຂົ້າຮ່ວມມາກ່ອນ ວັນທີ **20 ຕຸລາ 2023**
- ກະລຸນາສົ່ງບົດຄັດຫຍໍ້ ເພື່ອນໍາສະເໜີແບບປາກເປົ່າ ຫຼື ໂປດສະເຕີ ບໍ່ໃຫ້ກາຍ ວັນທີ **30 ກັນຍາ 2023**
- ສໍາລັບຜູ້ທີ່ຈະສົ່ງບົດຄັດຫຍໍ້ ເພື່ອນໍາສະເໜີແບບປາກເປົ່າ ຫຼື ໂປດສະເຕີ ແມ່ນໃຫ້ສົ່ງຕາມລາຍລະອຽດທີ່ຕິດຄັດມາພ້ອມນີ້
- ໝາຍເຫດ: ສ່ວນຄ່າໃຊ້ຈ່າຍໃນການເດີນທາງ, ກິນຢູ່ ແລະ ພັກເຊົາແມ່ນຮັບຜິດຊອບເອງ ຫຼື ກົມກອງຕົນເອງ.

➢ ຜູ້ປະສານງານຂອງຄະນະສາທາລະນະສຸກສາດ

- ນໍາສະເໜີປາກເປົ່າ (Oral) ພົວພັນ: ດຣ. ນ. ພູທອງ ພົມມະວົງສາ
  ເບີໂທ ແລະ ວອບແອັຟ: 020 2244 8877, E-mail: phummavongsa@gmail.com
- ນໍາສະເໜີໂປດສະເຕີ (Poster) ພົວພັນ: ອຈ. ວິລະກອນ ທອງມາລາ
  ເບີໂທ ແລະ ວອບແອັຟ: 020 2224 9226, E-mail: vthongmala@gmail.com
- ເຂົ້າຮ່ວມກອງປະຊຸມພົວພັນ: ນ. ສີສຸດາ ພົມມະວົງສາ
  ເບີໂທ ແລະ ວອບແອັຟ: 020 78286898, E-mail: Sesouda2018@gmail.com
- ຕິດຕາມຂໍ້ມູນລາຍລະອຽດເພີ່ມເຕີມທາງເວັບໄຊ (website) ແລະ ເພຈ (page face book) ຂອງຄະນະສາທາລະນະສຸກສາດລຸ່ມນີ້:

  **ຊື່ເວັບໄຊ:** www.fph-uhs.edu.la

  **ຊື່ເພຈ:** ຄະນະສາທາລະນະສຸກສາດ ມວສ ຫຼື ລິ້ງ:
  https://www.facebook.com/profile.php?id=100086834636693&mibextid=LQQJ4d

  **ລິ້ງລົງທະບຽນເຂົ້າຮ່ວມກອງປະຊຸມ:** https://forms.gle/P9Bi84BujaT2UoxW6

ຫວັງວ່າທ່ານຄົງພິຈາລະນາສົ່ງບົດຄົ້ນຄວ້າ ເພື່ອເຂົ້າຮ່ວມກອງປະຊຸມດັ່ງກ່າວຕາມຄວາມເໝາະສົມ.

ຄະນະບໍດີ

ມະຫາວິທະຍາໄລວິທະຍາສາດສຸຂະພາບ ຄະນະ ສາທາລະນະສຸກສາດ

**ປອ.ດຣ. ນ. ວັນພະນອມ ສີຈະເລີນ**

# ຄູ່ມືສຳລັບບົດຄັດຫຍໍ້ ເພື່ອນຳສະເໜີແບບປາກເປົ່າ ຫຼື ໂປດສະເຕີ

**(A) ສຳລັບຜູ້ນຳສະເໜີແບບປາກເປົ່າ**

**1. ການສົ່ງບົດຄັດຫຍໍ້ປະກອບມີ:**

- ບົດຄັດຫຍໍ້ ສ່ວນທີ 1 ປະກອບດ້ວຍ ຫົວຂໍ້, ຊື່ຜູ້ຂຽນ, ຊື່ສະຖາບັນທີ່ກ່ຽວຂ້ອງ, Email ຜູ້ຕິດຕໍ່, ສ່ວນທີ 2 ເນື້ອເລື່ອງປະກອບມີ ບົດນຳ, ຈຸດປະສົງ, ວິທີວິທະຍາ, ຜົນການສຶກສາ, ຂໍ້ສະເໜີແນະ ແລະ ຄຳສັບຫຼັກ 3-5 ຄຳ.
- ໃຫ້ຂຽນເປັນພາສາລາວ ໂດຍພິມໃນ MS Word (doc) ຂະໜາດເຈ້ຍ A4, ຂອບເທິງ, ຂອບລຸ່ມ ແລະ ຂອບດ້ານດ້ານຊ້າຍ ໃຫ້ໃສ່ 2 cm ແລະ ຂອບຂ້າງດ້ານຂວາ ໃຫ້ໃສ່ 2.5 cm, ຕົວໜັງສື Phetsarath OT ແລະ Single space. ສຳລັບຂະໜາດຕົວໜັງສື ຫົວຂໍ້ໃຫ້ໃຊ້ຂະໜາດ 14 ເຂັ້ມ ສ່ວນເນື້ອຫາອື່ນໆແມ່ນໃຫ້ໃຊ້ຂະໜາດ 11. ຄວນຫຼີກລ້ຽງຄຳສັບຫຍໍ້, ຮູບພາບ ຫຼື ຮູບສະແດງ ໃນການຂຽນເນື້ອເລື່ອງບົດຄັດຫຍໍ້ ແລະ ໃຫ້ຢູ່ໃນ 1 ໜ້າເຈ້ຍ (ຕົວຢ່າງທີ່ຕິດຄັດມາພ້ອມນີ້).

**2. ການກະກຽມບົດນຳສະເໜີ Power-Points**

- ຜູ້ນຳສະເໜີຕ້ອງກະກຽມ Power-Points ໃນການນຳສະເໜີແບບປາກເປົ່າ ພ້ອມທັງສົ່ງໃຫ້ຜູ້ປະສານງານ ບໍ່ໃຫ້ກາຍ ວັນທີ **30 ກັນຍາ 2023**;
- Power-Points ໃນການນຳສະເໜີຄວນປະກອບມີ ຫົວຂໍ້, ບົດນຳ, ຈຸດປະສົງການຄົ້ນຄວ້າ, ວິທີວິທະຍາການຄົ້ນຄວ້າ, ຜົນການສຶກສາ, ສະຫຼຸບການສຶກສາ ແລະ ຂໍ້ສະເໜີແນະ ຊຶ່ງຈຳນວນສະໄລ້ແມ່ນບໍ່ໃຫ້ເກີນ 15 ລະໄລ້ (ຕາມລາຍລະອຽດຄັດຕິດມາພ້ອມນີ້). ສຳຫຼັບການນຳສະເໜີແບບປາກເປົ່າໄລຍະເວລາທັງໝົດແມ່ນ 15 ນາທີຕໍ່ບົດ ໂດຍເວລາການນຳສະເໜີແມ່ນ 12 ນາທີ ແລະ ອີກ 3 ນາທີ ສຳລັບການສົນທະນາ ແລະ ຖາມ-ຕອບ.

**(B) ສຳຫຼັບຜູ້ນຳສະເໜີແບບ POSTER**

**1. ການກະກຽມໃນການສະແດງ poster**

- ໃຫ້ເຮັດແຜ່ນສະແດງ Poster ແບບແຜ່ນວາຍນິວ ຂະໜາດຄວາມກ້ວາງ 70 cm, ສູງ 100 cm (Poster ບໍ່ຄວນຈະເກີນຂະໜາດທີ່ກຳນົດໄວ້);
- ນຳ Poster ທີ່ຈະນຳມາສະແດງໃຫ້ກອງເລຂາທິການຢູ່ພື້ນທີ່ ເພື່ອໃຫ້ພວກເຂົາຊ່ວຍທ່ານໃນການຕິດ Poster.

**2. ການນຳສະເໜີ Poster**

- ຈະຕ້ອງໄດ້ຕິດ Poster ກ່ອນເວລາການນຳສະເໜີ Poster ໃນວັນທີ 9 ພະຈິກ 2023;
- ຜູ້ນຳສະເໜີແບບ Poster ຄວນກະກຽມຄຳເວົ້າສັ້ນກ່ຽວກັບ Poster ຂອງທ່ານ ເພື່ອປະຢັດເວລາ ແລະ ກຽມຄຳຕອບ;
- ການນຳສະເໜີ ຈະບໍ່ມີການກະກຽມ Power-Points ໂດຍຈະນຳສະເໜີກັບທີ່ຢູ່ແຜ່ນສະແດງ Poster.

**ໝາຍເຫດ:** ກໍລະນີທ່ານຕ້ອງຍົກເລີກການນຳສະເໜີຂອງທ່ານ, ກະລຸນາແຈ້ງໃຫ້ຜູ້ປະສານງານ ຫຼື ຄະນະກຳມະການຂອງກອງປະຊຸມ ໂດຍໄວທີ່ສຸດ ດັ່ງລຸ່ມນີ້:

- ນຳສະເໜີປາກເປົ່າ (Oral) ພົວພັນ: ດຣ. ນ. ພູທອງ ພົມມະວົງສາ
  ເບີໂທ ແລະ ວອບແອັຟ: 020 2244 8877, E-mail: phummavongsa@gmail.com

- ນຳສະເໜີໂປດສະເຕີ (Poster) ພິວພັນ: ອຈ. ວິລະກອນ ທອງມາລາ
  ເບີໂທ ແລະ ວອບແອັຟ: 020 2224 9226, E-mail: vthongmala@gmail.com
- ເຂົ້າຮ່ວມກອງປະຊຸມພົວພັນ: ນ. ສີສຸດາ ພົມມະວົງສາ
  ເບີໂທ ແລະ ວອບແອັຟ: 020 78286898, E-mail: Sesouda2018@gmail.com

**ການຮຽບຮຽງສຳລັບການກະກຽມບົດຄັດຫຍໍ້**

ຂະໜາດຂອງເຈ້ຍທີ່ຂຽນເປັນຂະໜາດ A4. ການຕັ້ງຄ່າເຈ້ຍ ດ້ານເທິງ ແລະ ດ້ານຊ້າຍແມ່ນ 2,0 cm, ດ້ານຂວາ ແລະ ດ້ານລຸ່ມແມ່ນ 2,5 cm, ບົດຄັດຫຍໍ້ (ປະມານ 250-300 ຄຳສັບ). 3-4 ຄຳສັບຫຼັກ ແລະ ຂໍ້ ຄວາມທີ່ເໝາະສົມ.

ຫົວຂໍ້ ຄວນກະທັດຫັດ ແລະ ພິມເປັນຕົວໜັງສື Phetsarath ຂະໜາດ 14 Bold Single Space.

ຊື່ນັກຄົ້ນຄ້ວາທັງໝົດໃນບົດຄົ້ນຄ້ວານີ້ ຕົວໜັງສືເປັນ Phetsarath ຂະໜາດ 11 Single Space.

ບົດຄັດຫຍໍ້ ຄວນໃຫ້ໄດ້ໃນໜ້າດຽວ ແລະ ຄວນອະທິບາຍຈຸດສຳຄັນຂອງການຄົ້ນຄ້ວາທີ່ພົບ ແລະ ສະຫຼຸບຜົນ ທີ່ໄດ້ຮັບ, ຕົວໜັງສືເປັນ Phetsarath ຂະໜາດ 11 Single Space. ບົດຄັດຫຍໍ້ປະກອບດ້ວຍຫົວຈໍ້ດັ່ງລຸ່ມນີ້:

- **ບົດນຳ** ສະເໜີຄວາມສຳຄັນຂອງການເຮັດການຄົ້ນຄວ້ານີ້, ຄວນຫັດກຸມເທົ່າທີ່ເປັນໄປໄດ້ໂດຍ ບໍ່ໃຫ້ໃສ່ຫົວເລື່ອງຍ່ອຍຄວນຫຼີກລ້ຽງການເວົ້າລາຍລະອຽດ ການທົບທວນເອກະສານທີ່ຫຼາຍເກີນໄປ, ໃຫ້ເວົ້າສະເພາະທີ່ຈຳເປັນ ແລະ ຂໍ້ມູນຫຼ້າສຸດທີ່ເປັນເຫດ ໃຫ້ຕ້ອງໄດ້ເຮັດການຄົ້ນຄວ້າໃນຄັ້ງນີ້ ແລະ ຄວນໃຫ້ມີປະຫວັດຄວາມເປັນມາ. ຄວນບອກຈຸດປະສົງຂອງການຄົ້ນຄ້ວາຢ່າງຊັດເຈນ.
- **ວິທີວິທະຍາການຄົ້ນຄວ້າ** **ນຳສະເໜີ** ການອອກແບບ, ສະຖານທີ່ການຄົ້ນຄ້ວາ, ກຸ່ມຕົວຢ່າງ, ການສຸ່ມຕົວຢ່າງ, ເຄື່ອງມື , ການວິເຄາະ.
- **ຜົນການສຶກສາ** ຜົນໄດ້ຮັບອາດຈະແບ່ງອອກເປັນຫົວຂໍ້ຍ່ອຍ ຂໍ້ມູນທີ່ໄດ້ຈາກການຄົ້ນຄ້ວາຄວນໄດ້ລວບລວມ, ຈັດລຽງລຳດັບ, ສອດຄ່ອງກັນ ແລະ ຄວນວິເຄາະທາງສະຖິຕິ. ຂໍ້ມູນດຽວກັນບໍ່ຄວນນຳສະເໜີຊ້ຳ ້ກັນ. ຄວນນຳ ສະເໜີແຕ່ຂໍ້ມູນທີ່ຈຳເປັນ. ຄວນຫຼີກລ້ຽງການອະທິບາຍທີ່ສັບສົນ ແລະ ບໍ່ກ່ຽວຂ້ອງກັນ.
- **ການສະຫຼຸບ** ຄວນສະຫຼຸບຜົນການວິໄຈທີ່ສຳຄັນພ້ອມຂໍ້ສະເໜີແນະ.

**ຄຳສັບທີ່ສຳຄັນ** ຄວນເປັນແຖວດຽວ ແລະ ເຮັດໃຫ້ດັດສະນີຫົວຂໍ້ພຽງພໍ ຕົວໜັງສືເປັນ Times New Roman ຂະໜາດ 11 Single Space.

## ແບບຟອມສະໝັກເຂົ້າຮ່ວມກອງປະຊຸມວິຊາການດ້ານສາທາລະນະສຸກ ຄັ້ງທີ 3

ໃນຫົວຂໍ້ "Challenge and Achievement of National Nutritional strategy in Lao PDR"

ໃນວັນທີ 9 ພະຈິກ 2023 ທີ່ຫ້ອງປະຊຸມ ມະຫາວິທະຍາໄລ ສຸພານຸວົງ ນະຄອນຫຼວງພະບາງ.

- ໃຫ້ບັນດາທ່ານຕື່ມຂໍ້ມູນ ແລະ ໝາຍອ້ອມວົງມົນ ໃສ່ຂໍ້ມູນຕາຕະລາງລຸ່ມນີ້:

| ລ/ດ | ຄໍາຖາມ | ຄໍາຕອບ |
|---|---|---|
| 1 | ຊື່ ແລະ ນາມສະກຸນ | |
| 2 | ອາຍຸ | |
| 3 | ເພດ | |
| 4 | ຊົນເຜົ່າ | |
| 5 | ຕໍາແໜ່ງ | |
| 6 | ໜ້າທີ່ຮັບຜິດຊອບ | |
| 7 | ບ່ອນປະຈໍາການ | |
| 8 | ລະດັບວິຊາສະເພາະ<br>ຕົວຢ່າງ: ຊັ້ນກາງ ສາຂາ ພະຍາບານ, ຜະດຸງຄັນ ອື່ນໆ...<br>ຊັ້ນສູງ ສາຂາ ສາທາລະນະສຸກສາດ ຣສຈ ອື່ນໆ<br>ປຕ ສາຂາ ການແພດ, ທັນຕະ, ການຢາ ອື່ນໆ<br>ປທ ສາຂາ ບໍລິຫານສາທາລະນະສຸກສາດ, ໂພຊະນາການ, ລະບາດວິທະຍາ ອື່ນໆ...<br>ປອ ສາຂາ ໂພຊະນາການ, ລະບາດ ອື່ນໆ... | ຊັ້ນກາງ ສາຂາ.............................<br>ຊັ້ນສູງ ສາຂາ..............................<br>ປຕ ສາຂາ.................................<br>ປທ ສາຂາ.................................<br>ປອ ສາຂາ.................................<br>ອື່ນໆ....................................... |
| 9 | ເບີມືຖື, ເບີຫ້ອງການ ແລະ ເບີແຟັກ ຂອງທ່ານ | ມືຖື.......................<br>ເບີຫ້ອງການ..............<br>ເບີແຟັກ.................. |
| 10 | ອີເມວ(E-mail): | |
| 11 | ມີຈຸດປະສົງເຂົ້າຮ່ວມກອງປະຊຸມເພື່ອ | 1.ນາສະເໜີຜົນການຄົ້ນຄ້ວາປາກເປົ່າ(presentation Oral)<br>2.ນໍາສະເໜີໂປດສະເຕີ(presentation Poster)<br>3.ເຂົ້າຮ່ວມຮັບຟັງ(Attending) |

ໝາຍເຫດ: ໃຫ້ແຕ່ລະທ່ານສົ່ງແບບຟອມສະໝັກກ່ອນ ວັນທີ 30 ຕຸລາ 2023 ຕາມໂມງລັດຖະການ.

- ດຣ. ນ. ພູທອງ ພົມມະວົງສາ ເບີໂທ ແລະ ວອບແອຟ: 020 22448877. E-mail: phummavongsa@gmail.com
- ນ. ສີສຸດາ ພົມມະວົງສາ ເບີໂທ ແລະ ວອບແອຟ: 020 78286898. E-mail: sesouda2018@gmail.com